## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະຖານເອກອັກຄະລັດຖະທູດ
ແຫ່ງ ສປປ ລາວ
ທີ່ ແບກແລັງ

Embassy of the Lao PDR
Bismarckallee 2A, 14193 Berlin
Tel: 030/89060647; Fax: 030/89060648

# ລະບຽບການຂໍອະນຸຍາດແຕ່ງດອງຈາກສະຖານທູດ

ເພື່ອປົກປ້ອງສິດຜົນປະໂຫຍດອັນຊອບທຳ ແລະ ກຽດສັກສີ ຂອງ ພົນລະເມືອງລາວ, ກໍ່ຄືປົກປັກຮັກສາວັດທະນະທຳ ຮີດຄອງປະເພນີອັນດີງາມຂອງຊາດ, ລັດຖະບານ ຈຶ່ງໄດ້ອອກກົດໝາຍວ່າດ້ວຍຄອບຄົວ ແລະ ດຳລັດວ່າດ້ວຍການແຕ່ງດອງ ລະຫວ່າງພົນລະເມືອງລາວ ກັບຄົນຕ່າງປະເທດ, ເພື່ອໃຫ້ພົນລະເມືອງລາວ ແລະ ຊາວຕ່າງປະເທດ ທີ່ມີຈຸດປະສົງແຕ່ງດອງກັນ ໄດ້ປະຕິບັດ, ຊຶ່ງເນື້ອໃນລະອຽດ ໄດ້ລະບຸໄວ້ໃນກົດໝາຍ ແລະ ດຳລັດດັ່ງກ່າວ.

ສຳລັບພົນລະເມືອງລາວ ທີ່ມີຈຸດປະສົງແຕ່ງດອງ ກັບຄົນຕ່າງປະເທດ ຫລື ຄົນເຊື້ອຊາດລາວ ທີ່ມີສັນຊາດຕ່າງປະເທດ ຫລື ຄົນບໍ່ມີສັນຊາດ ທີ່ ອາໄສຢູ່ຕ່າງປະເທດ (ນຳອຳນາດການປົກຄອງປະເທດນັ້ນ) ຈະຕ້ອງໄດ້ຂໍອະນຸຍາດ ຈາກສະຖານທູດເສຍກ່ອນ, ໂດຍທີ່ຄູ່ບ່າວສາວ ແຕ່ລະຄົນ ຈະຕ້ອງໄດ້ປະກອບເອກະ ສານຕ່າງໆ ດັ່ງລຸ່ມນີ້ຜູ້ລະ 01 ຊຸດ, ແຕ່ລະຊຸດປະກອບມີ:

1. ຄຳຮ້ອງຂໍອະນຸຍາດແຕ່ງດອງ (ສະເພາະພົນລະເມືອງລາວໃຫ້ປະກອບຕາມຮ່າງທີ່ມີໃຫ້, ສ່ວນຄົນຕ່າງປະເທດ ໃຫ້ຂຽນໃສ່ເຈ້ຍຂາວ A4, ມີລາຍເຊັນ, ໂດຍບໍ່ມີແບບຟອມ).
2. ຊີວະປະຫວັດ (ສະເພາະພົນລະເມືອງລາວໃຫ້ປະກອບຕາມຮ່າງທີ່ມີໃຫ້, ສ່ວນຄົນຕ່າງປະເທດໃຫ້ຂຽນໃສ່ເຈ້ຍຂາວ A4, ມີລາຍເຊັນ, ໂດຍບໍ່ມີແບບຟອມ).
3. ໃບຢັ້ງຢືນທີ່ຢູ່ (ສຳລັບພົນລະເມືອງລາວໃຫ້ເອົາມາຈາກອຳນາດການປົກຄອງຢູ່ລາວ)
4. ສຳເນົາບັດປະຈຳຕົວ, ໜັງສືຜ່ານແດນ ແລະ ບັດກົງສຸນ
5. ໜັງສືການເກີດ
6. ໃບແຈ້ງໂທດ (ສຳລັບພົນລະເມືອງລາວໃຫ້ເອົາມາຈາກອຳນາດການປົກຄອງຢູ່ລາວ)
7. ໃບຢັ້ງຢືນຄວາມເປັນໂສດ
8. ໃບຢັ້ງຢືນສຸຂະພາບ
9. ຮູບຂະໜາດ 3x4 ຊມ 03 ແຜ່ນ
   - ສະເພາະຜູ້ຊາຍ ທີ່ເປັນຄົນຕ່າງປະເທດ ຫລື ຄົນລາວສັນຊາດຕ່າງປະເທດ ຫລື ຄົນທີ່ບໍ່ມີສັນຊາດ, ຕ້ອງໄດ້ປະກອບເອກະສານ ໃນຂໍ້ 10 ແລະ 11 ມາຕື່ມ, ນອກຈາກທັງໝົດ 09 ຂໍ້ ຂ້າງເທິງນັ້ນແລ້ວ.
10. ໃບຢັ້ງຢືນຖານະເສດຖະກິດ (ໃບຢັ້ງຢືນວ່າມີວຽກເຮັດ, ມີລາຍໄດ້ປະຈຳເດືອນ)
11. ໃບຮັບປະກັນວ່າ ຈະສົ່ງຜູ້ຍິງທີ່ເປັນເມຍກັບລາວ, ຖ້າຫາກຜູ້ກ່ຽວຕ້ອງການ, ໃນເມື່ອເກີດມີການຢ່າຮ້າງ (ໃບເອກະສານສະບັບນີ້ຕ້ອງໃຫ້ທະນາຍ Notar ເຊັນຢັ້ງຢືນ)
12. ຄ່າທຳນຽມ 50 ເອີໂຣ

**ໝາຍເຫດ:** ໃຫ້ທັງສອງຄົນ, ຄູ່ບ່າວສາວປະກອບເອກະສານທັງໝົດ ຜູ້ລະຊຸດຕາມການແນະນຳ, ໂດຍຄົບຖ້ວນ, ແລ້ວຈຶ່ງສົ່ງໄປຍັງສະຖານທູດ, ເພື່ອຫລີກເວັ້ນການເສຍເວລາ.